**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ອົງການກວດກາລັດຖະບານ ເລກທີ 36 /ອກລ

ນະຄອນຫຼວງວຽງຈັນ, ວັນທີ 5 ກຸມພາ 2018

# ບົດແນະນຳ
# ຂອງອົງການກວດກາລັດຖະບານ
# ກ່ຽວກັບການກວດກາ ຕາມຜົນການກວດສອບ

- ອີງຕາມ ກົດໝາຍວ່າດ້ວຍ ການກວດກາລັດ ( ສະບັບປັບປຸງ ) ເລກທີ **41** /ສພຊ, ລົງ ວັນທີ**16 ພະຈິກ 2017**;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 146/ນຍ, ລົງວັນທີ 08 ພຶດສະ ພາ 2017 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງອົງການກວດກາລັດຖະ ບານ;
- ອີງຕາມ ບົດບັນທຶກການປະສານງານ ລະຫວ່າງ ອົງການກວດກາລັດຖະບານ ກັບອົງການ ກວດສອບແຫ່ງລັດ ລົງວັນທີ 23 ທັນວາ 2015;
- ອີງຕາມ ບົດສະຫຼຸບຖອດຖອນບົດຮຽນ ການກວດກາ ຕາມຜົນການກວດສອບ ຂອງ ອົງການກວດກາລັດຖະບານ ໃນຄັ້ງວັນທີ 31 ສິງຫາ 2017.

ການກວດກາ ຕາມຜົນການກວດສອບ ແມ່ນມີຄວາມຈຳເປັນ ເພື່ອລົງເລິກກວດກາ ພິສູດ ແລະ ຢັ້ງຢືນຄືນ ໃນແຕ່ລະບັນຫາ ໃຫ້ມີຄວາມລະອຽດຈະແຈ້ງ ເພື່ອສະເໜີມາດຕະການແກ້ໄຂ ຕໍ່ການຈັດຕັ້ງ ແລະ ບຸກຄົນ, ນິຕິບຸກຄົນ ເພື່ອເກັບກູ້ຊັບສິນ ທີ່ຖືກຕົກເຮ່ຍເສຍຫາຍ ຄືນມາໃຫ້ລັດໄດ້ຄົບຖ້ວນ. ພ້ອມ ກັນນັ້ນ, ຖ້າພົບເຫັນກົດໝາຍ, ນິຕິກຳລຸ່ມກົດໝາຍ ທີ່ເຫັນວ່າບໍ່ສອດຄ່ອງ ແລະ ຂັດກັບກົດໝາຍອື່ນໆ ທີ່ມີແລ້ວກໍ່ສະເໜີໃຫ້ກະຊວງ-ອົງການປັບປຸງແກ້ໄຂ ໃຫ້ທັນກັບສະພາບການ.

**ອົງການກວດກາລັດຖະບານ ອອກບົດແນະນຳ ການຈັດຕັ້ງປະຕິບັດ ດັ່ງນີ້:**

## I. ຈຸດປະສົງລະດັບຄາດໝາຍ.

**1.** ເພື່ອຈັດຕັ້ງຜັນຂະຫຍາຍ ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ໂດຍສະເພາະ ມາດຕາ 31 ຂໍ້ທີ 13 ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຖະບານ, ມາດຕາ 36 ຂໍ້ທີ 11 ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຂັ້ນແຂວງ ແລະ ບົດບັນທຶກການປະສານງານ ລະຫວ່າງອົງການ ກວດກາລັດຖະບານ ກັບອົງການກວດສອບແຫ່ງລັດ ສະບັບລົງວັນທີ 23 ທັນວາ 2015ໃຫ້ໄດ້ຮັບ ການຈັດຕັ້ງປະຕິບັດ ແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍສະເພາະ ກົມກວດກາລັດ ຂອງບັນດາ

ກະຊວງ-ອົງການ ແລະ ອົງການກວດກາລັດຂັ້ນແຂວງ-ນະຄອນຫຼວງ ກັບອົງການກວດສອບປະຈຳພາກ ໃຫ້ມີຄວາມຮັບຮູ້, ເຂົ້າໃຈເລິກເຊິ່ງ ແລະ ເປັນເຈົ້າການຈັດຕັ້ງປະຕິບັດ ການກວດກາ ຕາມຜົນການກວດສອບ ໃນແຕ່ລະປີ;

**2.** ເພື່ອເຮັດໃຫ້ ການກວດກາຕາມຜົນຂອງການກວດສອບ ໃນແຕ່ລະປີ ໄດ້ດຳເນີນການກວດກາ, ແກ້ໄຂຢ່າງເລິກເຊິ່ງ ຖືກຕ້ອງ ແລະ ທົ່ວເຖິງທຸກເປົ້າໝາຍ ຕາມຂໍ້ມູນຂອງອົງການກວດສອບສົ່ງໃຫ້ ແລະ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງມອບໝາຍໃຫ້ຈັດຕັ້ງປະຕິບັດ ແລະ ລາຍງານຜົນຂອງການກວດກາ ທັນຕາມເວລາ ທີ່ກຳນົດໄວ້;

**3.** ເພື່ອສືບຕໍ່ລົງເລິກກວດກາ ການລະເມີດກົດໝາຍ ແລະ ລະບຽບການໃນຂົງເຂດການຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານ, ຄຸ້ມຄອງໂຄງການລົງທຶນກໍ່ສ້າງພື້ນຖານໂຄງລ່າງຂອງລັດ ໃຫ້ລະອຽດຈະແຈ້ງ ພ້ອມທັງສະເໜີວິທີແກ້ໄຂ ເປັນແຕ່ລະກໍລະນີ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

**4.** ເຮັດໃຫ້ທຸກການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນ ໂດຍສະເພາະ ເປົ້າໝາຍທີ່ຖືກກວດກາ ເຫັນໄດ້ຄວາມຮັບຜິດຊອບຂອງຕົນ ໃນການປະຕິບັດກົດໝາຍ, ລະບຽບການ; ສ້າງ ແລະ ຍົກສູງສະຕິ ຕໍ່ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ໃຫ້ສູງຂຶ້ນ.

## II. ເປົ້າໝາຍ ແລະ ເນື້ອໃນການກວດກາ.

### ກ. ເປົ້າໝາຍ.

ເປົ້າໝາຍທີ່ຕ້ອງກວດກາ ຕາມຜົນການກວດສອບ ແມ່ນການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນ ທີ່ອົງການກວດສອບ ໄດ້ກວດສອບ, ມີຂໍ້ມູນຫຼັກຖານ ແລະ ຖືກຮັບຮອງເອົາຈາກກອງປະຊຸມສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລ້ວມອບໃຫ້ອົງການກວດກາລັດຖະບານ, ກົມກວດກາ ຂອງບັນດາກະຊວງ-ອົງການ ຕໍ່ການນຳກະຊວງ-ອົງການ, ອົງການປົກຄອງແຂວງ-ນະຄອນຫຼວງ ແລະ ອົງການກວດກາລັດຂັ້ນແຂວງ-ນະຄອນຫຼວງ ສືບຕໍ່ດຳເນີນການກວດກາ ແລະ ສະເໜີແກ້ໄຂ ໃນແຕ່ລະບັນຫາ ໃຫ້ລະອຽດຈະແຈ້ງ ຕາມກົດໝາຍ ກ່ອນຈະສະເໜີລາຍງານຕໍ່ກອງປະຊຸມສະພາປະຊາຊົນແຂວງ-ນະຄອນຫຼວງ.

### ຂ. ເນື້ອໃນການກວດກາ.

1. ຄົ້ນຄວ້າໄຈ້ແຍກ ຂໍ້ມູນຫຼັກຖານຕ່າງໆ ທີ່ອົງການກວດສອບແຫ່ງລັດ, ກົມກວດສອບກະຊວງ-ອົງການ, ອົງການກວດສອບປະຈຳແຕ່ລະພາກ ສົ່ງໃຫ້ ແລະ ດຳເນີນການກວດກາລົງເລິກແຕ່ລະບັນຫາ, ແຕ່ລະກໍລະນີ ຕໍ່ກັບເປົ້າໝາຍທີ່ຕ້ອງດຳເນີນການກວດກາ ໃຫ້ເລິກເຊິ່ງ, ຄົບຖ້ວນ.

2. ບົນພື້ນຖານການວິເຄາະ, ວິໄຈຂໍ້ມູນຫຼັກຖານ ທີ່ໄດ້ສົມທຽບໃສ່ກົດໝາຍ, ລະບຽບການ ທີ່ເຫັນວ່າເປັນການລະເມີດ ຜິດ, ຖືກແນວໃດ? ໃນແຕ່ລະບັນຫາ.

3. ນອກຈາກຂໍ້ມູນ, ຫຼັກຖານ ທີ່ໄດ້ຈາກອົງການກວດສອບແຫ່ງລັດ, ອົງການກວດສອບປະຈຳພາກແລ້ວ ຕ້ອງໄດ້ເກັບກຳ, ຊອກຮູ້ຂໍ້ມູນຫຼັກຖານໃໝ່ຕື່ມອີກ ທີ່ພົວພັນເຖິງເປົ້າໝາຍ ທີ່ຖືກກວດກາ ນຳການຈັດຕັ້ງ ແລະ ສັງຄົມ ເພື່ອສັງລວມເປັນເນື້ອໃນ ໃຫ້ແກ່ການກວດກາ.

## III. ວິທີດຳເນີນການກວດກາ.

ວິທີດຳເນີນການກວດກາ ປະກອບມີ 3 ບາດກ້າວຄື:

### ກ. ບາດກ້າວກະກຽມ.

1. ອົງການກວດກາລັດຖະບານ ຄົ້ນຄວ້າ ແລະ ຈັດແບ່ງຂໍ້ມູນ ທີ່ອົງການກວດສອບແຫ່ງລັດ ສົ່ງໃຫ້ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດຮັບຮອງ ໃນແຕ່ລະປີ ຕາມຄວາມເໝາະສົມ ບັນຫາ ໃດ ທີ່ອົງການກວດກາລັດຖະບານ ເປັນຜູ້ກວດກາ, ສະເໜີແກ້ໄຂ ແລະ ບັນຫາໃດ ທີ່ຈະສົ່ງໃຫ້ກົມ ກວດກາຂອງກະຊວງ-ອົງການ ແລະ ອົງການກວດກາລັດຂັ້ນແຂວງ-ນະຄອນຫຼວງ ເປັນເຈົ້າການດໍາ ເນີນການກວດກາ ໃຫ້ລະອຽດຈະແຈ້ງ ຕາມແຕ່ລະບັນຫາ ແລະ ສະເໜີແກ້ໄຂ;

2. ອົງການກວດກາລັດຂັ້ນແຂວງ-ນະຄອນຫຼວງ ຄົ້ນຄວ້າ ແລະ ຈັດແບ່ງຂໍ້ມູນ ທີ່ອົງການກວດ ສອບປະຈໍາພາກສົ່ງໃຫ້ ຕາມມະຕິຂອງກອງປະຊຸມສະພາປະຊາຊົນແຂວງ-ນະຄອນຫຼວງ ຮັບຮອງໃນແຕ່ລະ ປີ ບັນຫາໃດທີ່ອົງການກວດກາລັດຂັ້ນແຂວງ-ນະຄອນຫຼວງ ເປັນເຈົ້າການກວດກາ, ສະເໜີແກ້ໄຂ ແລະ ບັນຫາໃດ ທີ່ຈະສົ່ງໃຫ້ຂະແໜງກວດກາລັດ ຂອງບັນດາພະແນກອ້ອມຂ້າງແຂວງ-ນະຄອນຫຼວງແລະ ອົງການກວດກາລັດຂັ້ນເມືອງ ເປັນເຈົ້າການດໍາເນີນການກວດກາ, ສະເໜີແກ້ໄຂ;

3. ພາຍຫຼັງທີ່ອົງການກວດສອບແຫ່ງລັດ, ອົງການກວດສອບປະຈໍາພາກ ສະໜອງຂໍ້ມູນຫຼັກ ຖານຕ່າງໆໃຫ້ແລ້ວ ອົງການກວດກາລັດຖະບານ (ກົມວິຊາການກ່ຽວຂ້ອງ), ກົມກວດກາລັດ ກະຊວງ- ອົງການ; ອົງການກວດກາລັດ ຂັ້ນແຂວງ-ນະຄອນຫຼວງຕ້ອງຄົ້ນຄວ້າຂໍ້ມູນຫຼັກຖານຕ່າງໆ ໃຫ້ລະອຽດ ຈະແຈ້ງ, ໃນແຕ່ລະບັນຫາ ຖ້າຫາກເຫັນວ່າຂໍ້ມູນໃດບໍ່ທັນແຈ້ງ ຕ້ອງໄດ້ປະສານຄືນ ຫຼື ປະຊຸມຮ່ວມ ດ້ານວິຊາການ ກັບອົງການກວດສອບແຫ່ງລັດ, ອົງການກວດສອບປະຈໍາພາກ ເພື່ອໃຫ້ມີຄວາມເຂົ້າໃຈ ລະອຽດດ້ານເອກະສານ, ຫຼັກຖານ ແລະ ມີຄວາມເປັນເອກະພາບກັນ ໃນແຕ່ລະບັນຫາ ເພື່ອສືບຕໍ່ດໍາ ເນີນການກວດກາ ໃຫ້ລະອຽດຈະແຈ້ງ ສໍາເລັດຕາມເວລາ ທີ່ກໍານົດໄວ້;

4. ອົງການກວດກາລັດຖະບານ (ກົມວິຊາການກ່ຽວຂ້ອງ), ກົມກວດກາ ຂອງກະຊວງ-ອົງ ການ ແລະ ອົງການກວດກາລັດ ຂັ້ນແຂວງ-ນະຄອນຫຼວງ ຕ້ອງສ້າງແຜນການເຄື່ອນໄຫວ ເພື່ອດໍາເນີນການ ກວດກາ ໃນແຕ່ລະບັນຫາ ຕາມຂໍ້ມູນຜົນການກວດສອບ ທີ່ເຫັນວ່າຕ້ອງໄດ້ລົງເລິກກວດກາຕົວຈິງໃຫ້ ລະອຽດຈະແຈ້ງ ແລ້ວຄົ້ນຄວ້າສະເໜີແຕ່ງຕັ້ງໜ່ວຍງານ ຊຶ່ງປະກອບດ້ວຍຫຼາຍພາກສ່ວນຂະແໜງການ ກ່ຽວຂ້ອງເຂົ້າຮ່ວມ ຕາມຄວາມຕ້ອງການຕົວຈິງໃນແຕ່ລະໜ້າວຽກ ນໍາສະເໜີປະທານ ອົງການກວດກາ ລັດຖະບານ, ລັດຖະມົນຕີ ຂອງກະຊວງ-ອົງການ ແລະ ເຈົ້າແຂວງ-ເຈົ້າຄອງນະຄອນຫຼວງ ເພື່ອອອກຂໍ້ ຕົກລົງແຕ່ງຕັ້ງໜ່ວຍງານ ຫຼື ມອບສິດໃຫ້ຫົວໜ້າກົມກວດກາ ຂອງກະຊວງ-ອົງການ ແລະ ປະທານ ອົງການກວດກາລັດ ຂັ້ນແຂວງ-ນະຄອນຫຼວງ ອອກຂໍ້ຕົກລົງແຕ່ງຕັ້ງໜ່ວຍງານ ດໍາເນີນການກວດກາ ພ້ອມທັງອໍານວຍຄວາມສະດວກ ທາງດ້ານງົບປະມານ, ພາຫະນະຮັບໃຊ້;

5. ພະນັກງານ ຜູ້ທີ່ຈະເຂົ້າຮ່ວມກວດກາ ຕ້ອງໄດ້ເລືອກເຟັ້ນ ເອົາຜູ້ທີ່ມີວິຊາສະເພາະ ແລະ ມີ ຄວາມຮູ້, ຄວາມສາມາດ, ປະສົບການ ໃນວຽກງານຕົວຈິງ ກ່ຽວກັບວຽກນັ້ນ ເພື່ອເຮັດໃຫ້ການກວດກາ ໃນເປົ້າໝາຍນັ້ນ ຮັບປະກັນ ຢັ້ງຢືນຄຸນນະພາບ, ດ້ານເຕັກນິກ, ວິຊາການ ໃຫ້ສໍາເລັດທັນຕາມກໍານົດ ເວລາ ແລະ ມີປະສິດທິຜົນສູງ;

6. ກະກຽມງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ວິຊາສະເພາະ, ກໍານົດເວລາໃຫ້ພຽງພໍ ແລະ ເໝາະສົມກັບບໍລິມາດວຽກ ໃນການກວດກາ.

**ຂ. ບາດກ້າວດໍາເນີນການກວດກາ.**

1. ໜ່ວຍງານທີ່ໄດ້ຮັບການແຕ່ງຕັ້ງຈາກປະທານ ອົງການກວດກາລັດຖະບານ, ລັດຖະມົນຕີ ກະຊວງ-ອົງການ ແລະ ເຈົ້າແຂວງ-ເຈົ້າຄອງນະຄອນຫຼວງ ຕ້ອງຄົ້ນຄວ້າເຊື່ອມຊຶມ, ກໍາແໜ້ນເນື້ອໃນ

ແຜນການເຄື່ອນໄຫວ, ເຂົ້າໃຈໄດ້ຢ່າງເລິກເຊິ່ງໃນແຕ່ລະບັນຫາ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະສະຫາຍ ຢ່າງລະອຽດຈະແຈ້ງພ້ອມທັງສ້າງຄຳຖາມເຈາະຈີ້ມໃຫ້ເປົ້າໝາຍທີ່ຖືກກວດກາລາຍງານ;

2. ເຂົ້າພົບ ແລະ ແຈ້ງແຜນການເຄື່ອນໄຫວ ຕໍ່ຫົວໜ້າເປົ້າໝາຍທີ່ຖືກກວດກາຮັບຊາບ ແລະ ປຶກສາຫາລື ເພື່ອຄວາມເປັນເອກະພາບ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ໜ່ວຍງານກວດກາໄດ້ເຄື່ອນໄຫວ, ປະຕິບັດໜ້າທີ່ ຕາມແຜນການທີ່ວາງໄວ້;

3. ສະເໜີໃຫ້ເປົ້າໝາຍ ທີ່ຖືກກວດກາ ລາຍງານພ້ອມທັງສົ່ງບົດລາຍງານ ໃຫ້ໜ່ວຍງານກວດກາ, ເຈາະຈີ້ມຊັກຖາມຕໍ່ບັນຫາທີ່ບໍ່ທັນແຈ້ງ, ບັນທຶກການລາຍງານ, ການມອບ-ຮັບເອກະສານຕ່າງໆ ທີ່ກ່ຽວຂ້ອງ;

4. ດຳເນີນການກວດກາ ທາງດ້ານເອກະສານ ໄຈ້ແຍກໃຫ້ເຫັນບັນຫາອັນຖືກ-ອັນຜິດ ແລະ ກວດກາຕົວຈິງ ຢູ່ພາກສະໜາມ, ຮຽກພົບບຸກຄົນ ແລະ ການຈັດຕັ້ງກ່ຽວຂ້ອງ ມາລາຍງານສະພາບການ, ສະໜອງຂໍ້ມູນທີ່ຈຳເປັນ ຖ້າເຫັນວ່າມີບັນຫາ ຕ້ອງໄດ້ເຮັດບົດບັນທຶກ ແລະ ລົງລາຍເຊັນຮ່ວມກັນ ເປັນແຕ່ລະກໍລະນີ ເພື່ອຄວາມເປັນເອກະພາບ ຫຼື ເປັນຂໍ້ມູນຫຼັກຖານ ໃນການຈັດຕັ້ງປະຕິບັດຂັ້ນຕໍ່ໄປ;

5. ການກວດກາ ໃນແຕ່ລະເປົ້າໝາຍ ຕ້ອງປະຕິບັດຕາມຂັ້ນຕອນ, ຮອບຄອບ, ພາວະວິໄສ, ສຳເລັດທັນກຳນົດເວລາ ທີ່ໄດ້ກຳນົດໄວ້ ແລະ ປະຕິບັດເຂັ້ມງວດ ຕາມຫຼັກການ ຂອງການກວດກາລັດ ຕາມທີ່ກົດໝາຍກຳນົດໄວ້.

**ຄ. ບາດກ້າວສະຫຼຸບຜົນການກວດກາ.**

**ການສະຫຼຸບຜົນຂອງການກວດກາ ຕ້ອງປະຕິບັດດັ່ງນີ້:**

1. ສັງລວມບັນດາເອກະສານ, ຂໍ້ມູນ, ຫຼັກຖານຕ່າງໆ ບົດບັນທຶກ ທີ່ໄດ້ກວດກາມາເປັນບົດສະຫຼຸບ ຜົນຂອງການກວດກາ;

2. ຕີລາຄາໄຈ້ແຍກໃຫ້ລະອຽດຈະແຈ້ງ ດ້ານດີ, ດ້ານອ່ອນ, ຄວາມຖືກ, ຄວາມຜິດ ຂອງເປົ້າໝາຍທີ່ຖືກກວດກາ ແລະ ສະເໜີມາດຕະການ, ວິທີການແກ້ໄຂ ຜົນຂອງການກວດກາ ຕໍ່ເປົ້າໝາຍທີ່ຖືກກວດກາ ຊຶ່ງຈຳແນກລະອຽດຈະແຈ້ງ ໃນແຕ່ລະບັນຫາໂດຍສົມທຽບໃສ່ກົດໝາຍ ແລະ ລະບຽບການ ເພື່ອຕີລາຄາການຈັດຕັ້ງປະຕິບັດ ຂອງເປົ້າໝາຍທີ່ຖືກກວດກາ ໃຫ້ຈະແຈ້ງເຊັ່ນ: ຄວາມຜິດຂອງການຈັດຕັ້ງ, ຄວາມຜິດຂອງບຸກຄົນ, ນິຕິບຸກຄົນ ແມ່ນອັນໃດແທ້ ໝາຍຄວາມວ່າ: ຂໍ້ຜິດພາດແມ່ນໃຜເປັນຜູ້ສ້າງຂຶ້ນ ແລະ ແມ່ນໃຜຮັບຜິດຊອບ ໃຫ້ບອກແຈ້ງ ແລ້ວເບິ່ງດ້ານການເສຍຫາຍໃຫ້ແກ່ລັດ, ລວມໝູ່ ແມ່ນຫຼາຍປານໃດ ? ຈະເກັບກູ້ຄືນແນວໃດ ? ເປັນເງິນ, ວັດຖຸ ແມ່ນໃຜເປັນຜູ້ເກັບກູ້? ແມ່ນໃຜຈະເປັນຜູ້ແກ້ໄຂ ດ້ານບໍລິຫານ, ດ້ານກົດໝາຍ ຕາມຂະບວນການຍຸຕິທຳ;

3. ຜ່ານຮ່າງບົດສະຫຼຸບຜົນການກວດກາ ຕາມຜົນການກວດສອບ ພາຍໃນໜ່ວຍງານກວດກາ ແລ້ວສົ່ງຮ່າງບົດສະຫຼຸບດັ່ງກ່າວ ສະເໜີໃຫ້ຫົວໜ້າອົງການຈັດຕັ້ງ ຂອງເປົ້າໝາຍທີ່ຖືກກວດກາ ເພື່ອພິຈາລະນາ, ມີຄວາມເປັນເອກະພາບ ແລະ ມີຄຳເຫັນ, ລົງລາຍເຊັນຢັ້ງຢືນຮັບຮູ້ນຳ;

4. ສະຫຼຸບລາຍງານຜົນການກວດກາ ຕາມຜົນການກວດສອບ ຕ້ອງໄດ້ລາຍງານຕໍ່ປະທານອົງການກວດກາລັດຖະບານ, ລັດຖະມົນຕີຂອງກະຊວງ-ອົງການ ແລະ ເຈົ້າແຂວງ-ເຈົ້າຄອງນະຄອນ; ອົງການກວດສອບແຫ່ງລັດ, ອົງການກວດສອບປະຈຳພາກ, ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ,

ສະພາປະຊາຊົນແຂວງ-ນະຄອນຫຼວງ ຕາມກຳນົດເວລາ ທີ່ກຳນົດໄວ້ ເພື່ອຊາບ ແລະ ໃຫ້ທິດຊີ້ນຳ ໃນການຈັດຕັ້ງປະຕິບັດ ແລະ ແກ້ໄຂ.

## IV. ການຈັດຕັ້ງປະຕິບັດ.

1. ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ຕ້ອງໄດ້ເອົາໃຈໃສ່ ຊີ້ນຳ-ນຳພາ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການກວດກາ ຕາມຜົນການກວດສອບ; ການກວດກາເປົ້າໝາຍໃດສຳເລັດແລ້ວໃນໜ່ວຍງານທີ່ໄປກວດກາ ເປົ້າໝາຍໃດໜຶ່ງ ຕ້ອງໄດ້ມີການສະຫຼຸບຖອດຖອນບົດຮຽນ.

2. ກົມວິຊາການ ຂອງອົງການກວດກາລັດຖະບານ, ບັນດາກົມກວດກາ ຂອງກະຊວງ-ອົງການ ແລະ ອົງການກວດກາລັດ ຂັ້ນແຂວງ-ນະຄອນຫຼວງ ຕ້ອງໄດ້ມີການປະສານສົມທົບ ກັບອົງການກວດສອບແຫ່ງລັດ, ກົມກວດສອບກະຊວງ-ອົງການ ແລະ ອົງການກວດສອບປະຈຳຢູ່ແຕ່ລະພາກ ໃຫ້ເປັນປົກກະຕິ.

3. ກົມກວດກາ ກະຊວງ-ອົງການ, ອົງການກວດກາລັດ ຂັ້ນແຂວງ-ນະຄອນຫຼວງ ຕ້ອງສ້າງບົດບັນທຶກຮ່ວມມືກັນ ກັບກົມກວດກາກະຊວງ-ອົງການ, ອົງການກວດສອບປະຈຳພາກ ຄືກັບອົງການກວດກາລັດຖະບານ ກັບອົງການກວດສອບແຫ່ງລັດ ທີ່ໄດ້ເຮັດຜ່ານມາ.

4. ອົງການກວດກາລັດຖະບານ ຈະໄດ້ດຳເນີນການກວດກາ ຕາມຜົນການກວດສອບ ຕໍ່ເປົ້າໝາຍໃດໜຶ່ງ ທີ່ເຫັນວ່າມີຄວາມຫຍຸ້ງຍາກສັບສົນ ແລະ ພົວພັນກັບຫຼາຍພາກສ່ວນ; ສ່ວນບັນຫາໃດ, ເປົ້າໝາຍໃດ ທີ່ເຫັນວ່າບໍ່ມີຄວາມຫຍຸ້ງຍາກສັບສົນຫຼາຍ, ມີມູນຄ່າຕໍ່າ ແມ່ນຈະໄດ້ມອບໃຫ້ກົມກວດກາ ຂອງບັນດາກະຊວງ-ອົງການ ແລະ ອົງການກວດກາລັດຂັ້ນແຂວງ-ນະຄອນຫຼວງ ເປັນຜູ້ດຳເນີນການກວດກາ; ອົງການກວດກາລັດຖະບານ ຈະເຮັດໜ້າທີ່ມະຫາພາກ ຕິດຕາມ, ຊຸກຍູ້ ແລະ ນຳພາເຮັດກວດກາທົດລອງ ໃນເປົ້າໝາຍໃດໜຶ່ງ ເພື່ອເປັນບົດຮຽນ ໃຫ້ແກ່ກົມກວດກາ, ອົງການກວດກາລັດຂັ້ນແຂວງ-ນະຄອນຫຼວງ ເພື່ອເຮັດໃຫ້ການກວດກາ ຕາມຜົນຂອງການກວດສອບ ໄດ້ດຳເນີນກວດກາລົງເລິກ ແລະ ໄດ້ຮັບການແກ້ໄຂ ໃຫ້ຫຼາຍຂື້ນ ໃນຂອບເຂດທົ່ວປະເທດ.

5. ການກວດກາ ຕາມຜົນການກວດສອບ ໃນແຕ່ລະໄລຍະ ຕ້ອງສະຫຼຸບ, ລາຍງານໃຫ້ຂັ້ນເທິງຂອງຕົນ, ອົງການກວດກາລັດຖະບານ ຮັບຊາບ ແລະ ຂໍທິດຊີ້ນຳ ໃນການແກ້ໄຂ ຜົນຂອງການກວດກາ ແຕ່ລະເປົ້າໝາຍ ທີ່ຖືກກວດກາ ໃຫ້ທັນກັບສະພາບການ.

ຜ່ານການກວດກາ ຕາມຜົນການກວດສອບ ຖ້າຫາກມີຄວາມຫຍຸ້ງຍາກ ຕ້ອງໄດ້ລາຍງານຫາຄະນະພັກ-ຄະນະນຳ ຂອງກະຊວງ-ອົງການ ແລະ ແຂວງ-ນະຄອນຫຼວງ, ສະພາປະຊາຊົນແຂວງ-ນະຄອນຫຼວງ ແລະ ອົງການກວດກາລັດຖະບານ ຮັບຊາບ ເພື່ອມີທິດຊີ້ນຳ ໃນການຈັດຕັ້ງປະຕິບັດ.

**ປະທານ ອົງການກວດກາລັດຖະບານ**

**ປອ ບຸນທອງ ຈິດມະນີ**